ບົ່ວ: **Gall midge**

ຊື່ວິທະຍາສາດ: ***Orseolia oryzae***

## ຮູບຮ່າງລັກສະນະຂອງແມງບົ່ວ:

ແມງບົ່ວແມ່ນມີລັກສະນະຄ້າຍຄືກັນກັບຍຸງ, ຍາວປະມານ: 3 ຫາ4 *mm* ບໍລິເວນທ້ອງຈະມີສີສົ້ມ,ໜວດ ແລະ ຂາແມ່ນມີສີດຳ, ແມງບົ່ວມັກຈະວາງໄຂ່ໃນເວລາກາງຄືນໄຂ່ຂອງແມ່ງບົ່ວແມ່ນມີລັກສະນະຄ້າຍຄືກ້ວຍແຕ່ມີສີບົ່ວອ່ອນ ແລະ ມັກຈະພົບເຫັນຕາມໃບເຂົ້າ ແລະ ສາມາດວາງໄຂ່ໄດ້ 200 ໜ່ວຍ ການຂະຫຍາຍຕົວຂອງຕົວອ່ອນແມງບົ່ວແມ່ນໃຊ້ເວລາປະມານ: 25 ຫາ 28 ມື້.

## ລັກສະນະການທຳລາຍຂອງແມ່ງບົ່ວ.

ແມງບົ່ວມັກລະບາດໂດຍສະເພາະແມ່ນຊ່ວງຕົກກ້າ ແລະ ໄລຍະແຕກກໍ, ຕົວງຂອງແມ່ງບົ່ວຈະທະລາຍຍອດອ່ອນຂອງຕົ້ນເຂົ້າຫຼັງຈາກນັ້ນໃບເຂົ້າ ຫຼື ກາບເຂົ້າກາຍເປັນຫຼອດຫຸ້ມເອົາຕົວອ່ອນຂອງແມງບົ່ວໄວ້ ລັກສະນະຂອງໃບເຂົ້າຈະຄ້າຍຄືກັບໃບບົ່ວແທນທີ່ຈະກາຍເປັນໃບເຂົ້າ ດັ່ງນັ້ນຫຼາຍບ່ອນມັກເອີ້ນວ່າ: ຫຼອດເງິນ Silvershoot ໜໍ່ເຂົ້າທີ່ເປັນຫຼອດຈະບໍ່ອອກຮ່ວງ ເມື່ອຕົ້ນເຂົ້າເລີ້ມຕັ້ງທ້ອງແລ້ວ ແມ້ງບົ່ວກໍ່ຈະບໍ່ສາມາດທຳລາຍໄດ້ອີກຕໍ່ໄປ ເມື່ອມີການລະບາດຈະເຮັດໃຫ້ເຂົ້າມີການແຕກກໍຜິດປົກກະຕິ ເນື່ອງຈາກວ່າຕົວອ່ອນໄດ້ທຳລາຍຍອດອ່ອນຂອງເຂົ້າ ສະນັ້ນຈິ່ງເກີດມີການແຕກກໍເພື່ອທົດແທນຍອດອ່ອນທີ່ຕາຍໄປ ໃນກໍລະນີທີ່ມີການລະບາດທີ່ຮ້າຍແຮງແມ່ນຜົນຜະລິດຈະຫຼຸດ ເຖິງພຽງ: 50 ຫາ 70 %ຂອງຜົນຜະລິດ.

## ວິທີການປ້ອງກັນ ແລະ ກຳຈັດ:

**1. ແນວພັນເຂົ້າ:**

ແມ່ນໃຫ້ໃຊ້ແນວພັນເຂົ້າທີ່ຕ້ານທານຕໍ່ການທຳລາຍຂອງແມງບົ່ວ ໂດຍສະເພາະແມ່ນພັນເຂົ້າພື້ນເມືອງເຊັ່ນ: ພັນເມືອງງາເຂົ້າໝາກ ຫຼື ແນວພັນເຂົ້າທີ່ແຕກກໍສູງເພື່ອທົດແທນການທຳລາຍຂອງແມງບົ່ວ.

**2. ການຕົກກ້າ:**

ໃນເຂດທີ່ງພຽງແມ່ນໃຫ້ຫວ່ານກ້າໃນຊ່ວງໄລຍະກາງຫາທ້າຍເດືອນພຶດສະພາ ແລະ ໃຫ້ປັກດຳໃນຊ່ວງກາງຫາທ້າຍເດືອນມິຖຸນາ ແຕ່ບໍ່ຄວນໃຫ້ແກ່ຍາວຈົນຮອດເດືອນກໍລະກົດ, ເພື່ອເປັນການຕັດວົງຈອນການລະບາດຂອງແມງບົ່ວ.




ໃນເນື້ອທີ່ນາທີ່ມີການປູກເຂົ້າ 2 ລະດູ, ຕົ້ນເຂົ້າໃນຕົ້ນລະດູຝົນອາດບໍ່ຖືກທຳລາຍ ແຕ່ຕົ້ນເຂົ້າທີ່ປູກຫຼັງໃນລະດູຝົນອາດຖືກແມງບົ່ວທຳລາຍຢ່າງຮ້າຍແຮງ

**3. ການປັກດຳ:**

ລົກຫຍ້າອອກຈາກອ້ອມແອ້ມພື້ນທີ່ປະມານ: 20 *cm* ກ່ອນ ແລະ ຫຼັງປັກດຳ 2 ເທື່ອ, ປັກດຳເປັນແຖວໄລຍະຫ່າງບໍ່ໃຫ້ຫຼຸດ 25 *cm* ເພື່ອເປັນການຫຼຸດຜ່ອນຄວາມຊຸ່ມ ພ້ອມກັນນັ້ນຈະເຮັດໃຫ້ເຂົ້າແຕກກໍໄດ້ດີ, ຫຼີກເວັ້ນການປັກດຳທີ່ບໍ່ພ້ອມພຽງກັນ ຫຼື ຫ່າງກັນກໍ່ໃນຊ່ວງໄລຍະ 3 ອາທິດ.

**4. ການບົວລະບັດ:**

ຮັກສາລະດັບນ້ຳໃຫ້ມີປະລິມານໜ້ອຍທີ່ສຸດ ເພື່ອເປັນການຫຼຸດຜ່ອນຄວາມຊຸ່ມໃນຊ່ວງທີ່ຂາດແສງແດດ, ຫຼີກເວັ້ນການໃສ່ຝຸ່ນອາສິດ ( ຝຸ່ນເລັ່ງ *N* ) ແລະ ຄວນແຍກໃສ່ຢູ່: 3 ຄັ້ງໃນຊ່ວງໄລຍະການຂະຫຍາຍຕົວຂອງຕົ້ນເຂົ້າ.

**5. ການປ້ອງກັນ ແລະ ກຳຈັດແມ່ງບົ່ວ:**

— ຄວນຮັກສາລະດັບນ້ຳໃຫ້ໜ້ອຍທີ່ສຸດ ເມື່ອຂາດແສງແດດ

— ໃຊ້ດອກໄຟ, ຕະກຽງ,ຊາມນ້ຳເພື່ອລໍ້ແມງບົ່ວໃນເວລາກາງຄືນ

— ໃຊ້ສຸມໝຸນໄພພື້ນບ້ານເຊັ່ນ: ຂົມກະເດົາ, ເຄືອເຂົາຮໍ



ອາກາດຊຸມ ແລອຸນນະພູມເຢັນຈະເກີດມີການລະບາດຂອງແມ່ງບົ່ວ



ຕົວແກ່ຂອງແມງບົ່ວຈະວ່ອງໄວໃນລະດູຝົນ ແຕ່ຈະອ່ອນແອ ແລະ ອາໃສຢູ່ປ່າເຂົ້າໃນລະດູແລ້ງ.





ກະຊວງກະສິກຳ ແລະ ປ່າໄມ້
ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ


# ຂໍ້ແນະນຳ
# ການປ້ອງກັນເຂົ້າເປັນບົ່ວ
## ( Gall midge )




Laos Extension for Agriculture Project
P.O. Box 9159 Vientiane, Lao P.D.R.
Tel/fax: 021 732 162 Mobile: 020 552677
Email: LEAP@laoex.org


**ຈັດພິມໂດຍ:**

ໜ່ວຍງານພັດທະນາຮູບແບບ ແລະ ຝຶກອົບຮົມ CETDU